

by Gunkarta Gunawan Kartapranata CC-BY-SA 3.0

## ອິນໂດເນເຊຍ

**ເຂົ້າຮ່ວມອາຊຽນ:** 8 ສິງຫາ 1967
**ນະຄອນຫຼວງ:** ຈາກາຕາ
**ປະຊາກອນ:** 240 ລ້ານ ຄົນ
**ເນື້ອທີ່:** 1,919,000 ກມ$^2$
**ຄວາມໜາແໜ້ນ:** 130 ຄົນ/ກມ$^2$
**ອາຍຸປານກາງ:** 28.2 ປີ
**ສາສະໜາ:** ປະມານ 80% ເປັນຊາວມຸດສະລິມ, 10% ເປັນຊາວຄິສຕຽນ ແລະ ເປັນຊາວພຸດນິພຽງໜ້ອຍດຽວເທົ່ານັ້ນ.
**ພາສາ:** ພາສາອິນໂດເນເຊຍ ຄ້າຍຄືກັບພາສາ ມາເລ ເຊິ່ງເປັນທາງການ. ຄົນສ່ວນຫຼາຍເວົ້າພາສາໜຶ່ງໃນ 3,000 ພາສາຊົນເຜົ່າຂອງປະເທດ ແລະ ຮຽນພາສາອິນໂດເນເຊຍ ເປັນພາສາທີສອງຂອງພວກເຂົາ.
**ເສດຖະກິດ:** ອິນໂດເນເຊຍ ມີເສດຖະກິດໃຫຍ່ທີ່ສຸດໃນກຸ່ມອາຊຽນ ເຊິ່ງໄດ້ຮັບຄວາມເສຍຫາຍຫຼາຍກວ່າປະເທດອື່ນໆ ໃນວິກິດການການເງິນເອເຊຍໃນປີ 1997-1998. ແຕ່ປະຈຸບັນນີ້ ເສດຖະກິດແມ່ນເຕີບໂຕຢ່າງໝັ້ນຄົງອີກຄັ້ງ ເຊິ່ງສາມາດສົ່ງນ້ຳມັນ, ກາສທຳມະຊາດ, ຢາງ ແລະ ໄມ້ອອກເປັນຈຳນວນຫຼວງຫຼາຍ.
**ລາຍໄດ້ຕໍ່ຄົນ:** $2,230 (US)
**ລາຍໄດ້ປຽບທຽບຕໍ່ຄົນ:** $4,300 (US)
**ລະດັບລາຍໄດ້ປຽບທຽບ:** 156
**ສຳປະສິດຈີນີ:** 37







# ອິນໂດເນເຊຍ

## ພູມມີປະເທດ

ອິນໂດເນເຊຍເປັນປະເທດທີ່ມີພົນລະເມືອງຫຼາຍເປັນອັນດັບ 4 ຂອງໂລກ. ມີພຽງແຕ່ປະເທດຈີນ, ອິນເດຍ ແລະ ສະຫະລັດອາເມຣິກາເທົ່ານັ້ນທີ່ມີພົນລະເມືອງຫຼາຍກວ່າ. ຄົນອິນໂດເນເຊຍອາໄສຢູ່ແບບກະແຈກກະຈາຍເກືອບ 4 ເກາະໃຫຍ່ ແລະ ອີກ 15,000 ເກາະນ້ອຍ. ຈາກສົ້ນສຸດທາງຕາເວັນອອກຂອງປະເທດຫາສົ້ນສຸດທາງຕາເວັນຕົກ ອິນໂດເນເຊຍ ມີຄວາມກວ້າງ 5,100 ກມ. ຈາກທິດເໜືອຫາໃຕ້ ກວ້າງ 1,800 ກມ. ພື້ນທີ່ເຫຼົ່ານັ້ນສ່ວນຫຼາຍເປັນນໍ້າ ບໍ່ແມ່ນທີ່ດິນ ແຕ່ອິນໂດເນເຊຍກໍ່ຍັງຄືງໃຫຍ່ກວ່າປະເທດອື່ນໃນກຸ່ມອາຊຽນ. ມີເນື້ອທີ່ທຽບເທົ່າປະເທດລາວ, ກຳປູເຈຍ, ຫວຽດນາມ, ໄທ ແລະ ມຽນມ້າມາຮວມກັນ.

ເພາະວ່າມັນໃຫຍ່ຫຼາຍ ເຊິ່ງປະກອບດ້ວຍເກາະທີ່ແຍກຈາກກັນຫຼາຍຮ້ອຍເກາະ ແລະ ຫຼາຍບ້ານກະແຈກກະຈາຍໄປຕາມຮ່ອມພູຜາ ສະນັ້ນຈຶ່ງມີຫຼາຍວັດທະນະທຳໄດ້ພັດທະນາຂຶ້ນໃນອິນໂດເນເຊຍ ເຊິ່ງມີຊົນເຜົ່າທີ່ແຕກຕ່າງກັນເຖິງ 300 ຊົນເຜົ່າ ແລະ ໃຊ້ພາສາເຖິງ 250 ພາສາ.



frank wouters CC-BY 2.0

ອະນຸສອນສະຖານບູຮານແຫ່ງໂບໂຣບູດົວແມ່ນວິຫານສາສະໜາພຸດທີ່ໃຫຍ່ທີ່ສຸດໃນໂລກ ແລະ ເປັນສະຖານທີ່ທ່ອງທ່ຽວອັນດັບ 1 ໃນອິນໂດເນເຊຍ. ມັນມີຄວາມເກົ່າແກ່ປະມານ 1200 ປີ. ໂບໂຣບູດົວ ຖືກສ້າງຂຶ້ນ 9 ຊັ້ນ ແລະ ມີທາງຍ່າງອ້ອມຮອບແຕ່ລະຊັ້ນ. ພະສົງທີ່ເຫັນຢູ່ນີ້ແມ່ນກຳລັງນະມັດສະການຢູ່ຊັ້ນເທິງສຸດ.



by Flydime CC-BY-3.0



by Christopher CC-BY-SA 3.0

## ໜັງຕຸກກະຕາ

ເປັນເວລາຫຼາຍຮ້ອຍປີແລ້ວ ທີ່ໜັງຕຸກກະຕາ (ເຄື່ອງເຊີດ) ໄດ້ໃຫ້ຄວາມບັນເທີງແກ່ຄົນອິນໂດເນເຊຍ. ເຄື່ອງເຊີດເງົາ ດັ່ງທີ່ເຫັນຢູ່ນີ້ ແມ່ນເປັນທີ່ນິຍົມໃນເກາະຊາວາ ແລະ ບາລີ. ຕຸກກະຕາທີ່ດີທີ່ສຸດແມ່ນຜະລິດຈາກໜັງຄວາຍ. ຕຸກກະຕາແຕ່ລະໂຕຈະຖືກເຊີດຂຶ້ນໂດຍມີໄມ້ສາມທ່ອນທີ່ເຮັດຈາກເຂົາຄວາຍ ຫຼື ໄມ້ໄຜ່ເປັນໂຕຊ່ວຍ.



ເມື່ອສອງພັນປີມາແລ້ວ ພໍ່ຄ້າຊາວອິນໂດເນເຊຍໄດ້ແລ່ນເຮືອໄປຍັງທະວີບອາຟຣິກາ. ພວກເຂົາເປັນນັກເດີນເຮືອທີ່ມີຄວາມສາມາດ. ຮູບພາບນີ້ແມ່ນເຮືອລຳໜຶ່ງທີ່ແກະສະຫຼັກຢູ່ຝາວັດໂບໂຣບູດົວປະມານປີ 800.

# ປະຫວັດສາດ

ຢ່າງໜ້ອຍກໍ່ 4,000 ປີ ຜ່ານມາແລ້ວ ທີ່ມີຄົນອາໄສຢູ່ໃນເກາະເຫຼົ່ານີ້. ພວກເຂົາປູກເຂົ້າ, ສ້າງບ້ານ ແລະ ເລີ່ມຄ້າຂາຍກັບອິນເດຍ ແລະ ຈີນ.

ໃນສະຕະວັດທີ 7 ອິນໂດເນເຊຍກາຍເປັນອານາຈັກແຫ່ງການຄ້າທີ່ຊີງອຳນາດ. ຄົນສ່ວນຫຼາຍເຊື່ອຖືສາສະໜາພຸດ ແລະ ຮິນດູ. ພວກເຂົາສ້າງໂບໂຣບູດົວ ເຊິ່ງເປັນອະນຸສາວະລີທາງສາສະໜາພຸດທີ່ໃຫຍ່ທີ່ສຸດໃນໂລກບົນເກາະຊາວາ ແລະ ໄດ້ຄ້າຂາຍກັບປະເທດອື່ນໃນເອເຊຍຕາເວັນອອກສ່ຽງໃຕ້.

ຈາກນັ້ນ ຊາວຄ້າຂາຍຮິນດູກໍ່ມາຮອດ ແລະໄດ້ສ້າງອານາຈັກໃໝ່ຂຶ້ນບົນເກາະອີກແຫ່ງໜຶ່ງ ຄື ເກາະ ສຸມາດຕຣາ. ອິດທິພົນຂອງພວກເຂົາແຜ່ຂະຫຍາຍອອກ. ປະຈຸບັນນີ້ ຄົນສ່ວນຫຼາຍໃນອິນໂດເນເຊຍແມ່ນຊາວມຸດສະລິມ.

ເມື່ອເອີຣົບເລີ່ມຊີງອຳນາດ ຊາວຄ້າຂາຍເອີຣົບຕ້ອງການເຄື່ອງເທດທີ່ເຕີບໃຫຍ່ໄດ້ດີໃນພູມອາກາດຂອງອິນໂດເນເຊຍ. ປອກຕຸຍການ, ອັງກິດ, ແລະ ໂຮນລັງ ທັງໝົດພະຍາຍາມຄອບຄອງອິນໂດເນເຊຍ. ໂຮນລັງເຮັດສຳເລັດ ແລະ ອິນໂດເນເຊຍກໍ່ກາຍມາເປັນເມືອງຂຶ້ນຂອງໂຮນລັງ.

ໃນປີ 1945 ເມື່ອສົງຄາມໂລກຄັ້ງທີ II ສິ້ນສຸດລົງ ໂຮນລັງພະຍາຍາມ

# ນັກລ່າຫົວແຫ່ງເກາະບໍເນີໂອ

ດົນນານມາແລ້ວ ຄົນດາຢັກທີ່ຢູ່ເທິງເກາະບໍເນີໂອ ເຄີຍເປັນພວກລ່າຫົວມະນຸດ. ພວກເຂົາຈະຕັດ ແລະ ສະສົມຫົວຂອງ ພວກສັດຕູ. ຄົນ ສ່ວນໃຫຍ່ແມ່ນ ໄດ້ຍົກເລີກ ການປະຕິບັດ ດັ່ງກ່າວແລ້ວ ແຕ່ພວກເຂົາກໍ່ ຍັງຖືວ່າເປັນນັກສູ້ ທີ່ໂຫດຢູ່.



ໃນລະຫວ່າງສົງຄາມໂລກ ຄັ້ງທີ II ເມື່ອຍີ່ປຸ່ນໄດ້ຢຶດຄອງອິນໂດເນ ເຊຍ ພວກເຂົາໄດ້ປະຕິບັດຕໍ່ຄົນທ້ອງຖິ່ນຢ່າງໂຫດ ຮ້າຍ. ສະນັ້ນ ຈຶ່ງເກີດມີການລວມຕົວກັນຂອງນັກຮົບ ດາຢັກຫຼາຍຄົນກັບທະຫານ ຝ່າຍພັນທະມິດເພື່ອຕໍ່ສູ້ ຕ້ານຍີ່ປຸ່ນ. ທາງດາ ຢັກໄດ້ລາຍງານ ການກະທຳ ຂອງກອງທັບ ຍີ່ປຸ່ນໃຫ້ແກ່ ຝ່າຍພັນທະ ມິດພ້ອມທັງໄດ້ ສັງຫານ ແລະ ຈັບ ທະຫານຍີ່ປຸ່ນໄດ້ປະ ມານ 1,500 ຄົນ. ໃນບາງ ກໍລະນີ, ພວກເຂົາກໍ່ໄດ້ຕັດຄໍ ແລະ ສະ ສົມຫົວຂອງສັດຕູໄວ້.

ຄອບຄອງອີກເທື່ອໜຶ່ງ. ແຕ່ອິນໂດເນເຊຍປະກາດເອກະລາດ ແລະ ທ່ານ ສຸກາໂນ ກໍ່ກາຍມາເປັນປະທານປະເທດ. ມັນກິນເວລາ 4 ປີ ຈຶ່ງກ່ວາ ພວກເຂົາຈະສາມາດຂັບໄລ່ຊາວໂຮນລັງອອກຈາກປະເທດ.



by Team Yatta CC-BY-2.5

ໜ້າກາກນີ້ແມ່ນເຄີຍໃຊ້ໃນພິທີ ຕ່າງໆມາແລ້ວເທິງເກາະຊາວາ.

## ບັນດາເກາະຂອງອິນໂດເນເຊຍ

ອິນໂດເນເຊຍຄອບຄຸມຫຼາຍກວ່າ 15,000 ເກາະ ແຕ່ມີຫຼາຍເກາະເປັນ ເກາະນ້ອຍ ແລະບໍ່ມີຄົນອາໄສຢູ່. ມັນເປັນສ່ວນໜຶ່ງຂອງໝູ່ເກາະທີ່ໃຫຍ່ ກວ່າ ເຊິ່ງລວມມີ ຟີລິບປິນ ເຊິ່ງເປັນໝູ່ເກາະທີ່ໃຫຍ່ທີ່ສຸດໃນໂລກ. ບັນດາ ເກາະທີ່ໃຫຍ່ທີ່ສຸດໃນອິນໂດເນເຊຍແມ່ນ:

**ສຸມາດຕຣາ:** ສຸມາດຕຣາແມ່ນໝູ່ເກາະໃຫຍ່ທີ່ໄກທີ່ສຸດທາງທິດຕາ ເວັນຕົກຂອງອິນໂດເນເຊຍ. ມັນມີພູມອາກາດທີ່ຮ້ອນ ແລະ ຊຸ່ມ, ມີສັດປ່າ ຫຼາຍຊະນິດ ລວມມີ: ໂຕ ແຮດ, ເສືອ, ທາເປີ, ຊ້າງ ແລະ ລີງອຸລັງອຸຕັງ.





by Steve Cornish CC-BY-2.0

ຣາໂຟລີເຊຍ (Rafflesia) ແມ່ນດອກໄມ້ທີ່ໃຫຍ່ທີ່ສຸດໃນໂລກ. ບາງຊະນິດມີຄວາມກວ້າງເຖິງ 1 ແມັດ ແລະ ມີນ້ຳໜັກເຖິງ 10 ກິໂລກຣາມ. ຣາຟະລີເຊຍໄດ້ເກີດຂຶ້ນຕາມເກາະຕ່າງໆຂອງອິນໂດເນເຊຍ, ມາເລເຊຍ ແລະ ຟີລິບປິນ.

ຣາຟະລີເຊຍ ບໍ່ມີລຳຕົ້ນ (ເຄືອ ຫຼື ກ້ານ). ມັນຈະເລີນໃຫຍ່ຂຶ້ນຈາກການຝັງຕົວເຂົ້າໃນເຄືອຂອງພືດຊະນິດອື່ນ. ສິ່ງທີ່ພວກເຮົາເຫັນທັງໝົດນີ້ແມ່ນດອກຂອງມັນ.

ມັນຖືກຕັ້ງຊື່ຕາມຊື່ຂອງທ່ານໂທມັສ ຣາໂຟ (Thomas Raffles) ຜູ້ສ້າງຕັ້ງນະຄອນຍຸກໃໝ່ ຂອງ ສິງກະໂປ.

**ຊາວາ**: ເຖິງແມ່ນວ່າ ມັນເປັນພຽງເກາະໃຫຍ່ອັນດັບ 4 ຂອງອິນໂດເນເຊຍ ຊາວາກໍ່ມີພົນລະເມືອງຫຼາຍກວ່າເຄິ່ງໜຶ່ງຂອງພົນລະເມືອງໃນປະເທດ ແລະ ນະຄອນຫຼວງຢູ່ໃນຊາວາ. ໃນເກາະນີ້ມີ ວັດສາສະໜາພຸດ ແລະ ຮິນດູ ທີ່ສຳຄັນຈຳນວນຫຼາຍເຊັ່ນ: ພະທາດໃຫຍ່ ໂບໂຣບູດົວ. ຈາກຊາກທີ່ໄດ້ຖືກຄົ້ນຄວ້າໃຫ້ຮູ້ວ່າ ຄົນຍຸກຕົ້ນໆ ເຊິ່ງເປັນຄົນດຶກດຳບັນອາໄສຢູ່ໃນເກາະຊາວາ ຕັ້ງແຕ່ 500,000 ຫາ 1,000,000 ປີມາແລ້ວ.

**ບໍນີໂອ**: ມີສາມປະເທດຮ່ວມຢູ່ໃນ ບໍນີໂອ. ພື້ນທີ່ສ່ວນຫຼາຍຂອງເກາະເປັນຂອງອິນໂດເນເຊຍ. ບາງຈຳນວນເປັນຂອງມາເລເຊຍ ແລະພື້ນທີ່ສຸດທ້າຍ ເຊິ່ງເປັນພື້ນທີ່ນ້ອຍແມ່ນປະເທດບຣູໄນ. ບໍນີໂອ ແມ່ນເກາະທີ່ໃຫຍ່ໃນຂົງເຂດນີ້ ແຕ່ມີພົນລະເມືອງອາໄສຢູ່ພຽງເລັກໜ້ອຍ. ສ່ວນຫຼາຍພື້ນທີ່ເປັນພູເຂົາ ແລະ ປົກຄຸມດ້ວຍປ່າດົບ ຈຶ່ງບໍ່ຄ່ອຍມີຜູ້ໃດໃນໂລກຮູ້ຈັກ.

**ນິວກີເນ**: ເກາະທີ່ໃຫຍ່ທີ່ສຸດໃນເອເຊຍຕາເວັນອອກສ່ຽງໃຕ້ ໄດ້ຖືກແຍກອອກເປັນສອງປະເທດ. ສ່ວນຕາເວັນຕົກເຄິ່ງໜຶ່ງຂອງ ປາປົວ ໄດ້ກາຍເປັນສ່ວນໜຶ່ງຂອງອິນໂດເນເຊຍໃນປີ 1963. ຍ້ອນແນວນີ້ຫຼາຍຄົນໃນເກາະຈຶ່ງບໍ່ພໍໃຈ ແລະຕ້ອງການຢາກແຍກຕົວອອກເປັນປະເທດອິດສະລະ ແຕ່ການເລືອກຕັ້ງປີ 1969 ຕັດສິນວ່າ ມັນຈະຍັງຄົງເປັນສ່ວນໜຶ່ງຂອງອິນໂດເນເຊຍ.

# ການລະເບີດຄັ້ງໃຫຍ່ທີ່ສຸດ

ມີວັນໜຶ່ງໃນປີ 1883 ຜູ້ຄົນໃນອົດສະຕຣາລີໄດ້ຍິນສຽງແປກໆ. ມັນຄ້າຍຄືກັບສຽງລະເບີດ, ແຕ່ເມື່ອພວກເຂົາເບິ່ງໄປອ້ອມຮອບ ພວກເຂົາກໍ່ບໍ່ສັງເກດເຫັນສິ່ງຜິດປົກກະຕິໃດໆ. ພວກເຂົາຄິດວ່າມັນເປັນສຽງທີ່ເກີດຈາກຫີນໃຫຍ່ໃນຮ່ອມພູໃກ້ໆນັ້ນຖະຫຼົ່ມ.

ແຕ່ມັນບໍ່ແມ່ນ. ສຽງນັ້ນແມ່ນມາຈາກພູເຂົາໄຟທີ່ຢູ່ເທິງເກາະໜຶ່ງທີ່ຕັ້ງຢູ່ລະຫວ່າງເກາະຊາວາ ກັບ ເກາະສຸມາດຕຣາກຳລັງລະເບີດຂຶ້ນ ເຊິ່ງມັນຢູ່ໄກອອກໄປເຖິງ 3,500 ກິໂລແມັດ.



ພູເຂົາໄຟນີ້ມີຊື່ວ່າ ຄຣາກາໂຕອາ (Krakatoa). ມັນເລີ່ມປ່ອຍຂີ້ເທົ່າ, ອາຍນ້ຳ ແລະ ກຸ່ມຄວັນອອກມາໃນເດືອນພຶດສະພາ, ປີ 1883. ໃນວັນທີ 27 ເດືອນສິງຫາ ມັນໄດ້ລະເບີດຂຶ້ນ ເຊິ່ງເປັນການລະເບີດຂອງພູເຂົາໄຟທີ່ໃຫຍ່ທີ່ສຸດໃນໂລກເທົ່າທີ່ມີການບັນທຶກມາ.

ການລະເບີດຄັ້ງນີ້ແມ່ນໃຫຍ່ຫຼາຍ ແລະ ເປັນຕາຢ້ານທີ່ສຸດເກີນທີ່ເຮົາຈະສາມາດຈິນຕະນາການໄດ້. ຕໍ່ໄປນີ້ ແມ່ນຄວາມຈິງບາງຢ່າງກ່ຽວກັບການລະເບີດຂອງມັນ.

• ການລະເບີດໄດ້ເຮັດໃຫ້ປາກຂອງພູເຂົາໄຟກວ້າງອອກ 6 ກິໂລແມັດ.

• ການສັ່ນໄຫວຂອງແຜ່ນດິນໄດ້ເຮັດໃຫ້ເກີດຄື້ນຍັກໃນມະຫາສະໝຸດ ເຊິ່ງຮູ້ກັນວ່າ "ຊືນາມິ." ມີຄື້ນໜຶ່ງໃນຄື້ນເຫຼົ່ານີ້ສູງເຖິງ 30 ແມັດ. ເມື່ອມັນເຄື່ອນຕົວເຂົ້າຮອດເກາະສຸມາດຕຣາ ແລະ ເກາະຊາວາ ມັນໄດ້ທຳລາຍໄປຫຼາຍໝູ່ບ້ານຈົນຮາບກ້ຽງ ແລະ ໄດ້ສັງຫານຄົນເຖິງ 30,000 ຄົນ.

• ພູເຂົາໄຟເຮັດໃຫ້ເກີດເປັນຫີນຫຼາຍຊະນິດ. ຫີນຊະນິດໜຶ່ງມີຮູອາກາດນ້ອຍໆປະສົມຢູ່ ມັນກາຍເປັນກ້ອນຫີນທີ່ມີນ້ຳໜັກເບົາຫຼາຍຈົນສາມາດຟູເທິງໜ້ານ້ຳໄດ້. ເຮືອທີ່ແລ່ນໄປມາໃນທະເລອ້ອມຄຣາກາໂຕອາ ພົບວ່າຕົນເອງເຄື່ອນຕົວໄດ້ຍາກຫຼາຍ ເພາະໜ້ານ້ຳເຕັມໄປດ້ວຍກ້ອນຫີນທີ່ຟູຢູ່.

• ຂີ້ຝຸ່ນທີ່ເກີດຈາກການລະເບີດ ໄດ້ປິວຂຶ້ນໄປໃນທ້ອງຟ້າ ແລະຂະຫຍາຍຕົວອອກໄປທົ່ວທຸກທິດທາງ. ກຸ່ມຂີ້ຝຸ່ນໄດ້ກັ້ງບັງແສງຕາເວັນໄວ້ຈົນເຮັດໃຫ້ອາກາດໜາວລົງ. ອຸນຫະພູມໂດຍສະເລ່ຍອ້ອມຮອບໂລກໄດ້ຫຼຸດລົງຈາກປົກກະຕິ 1 ອົງສາ.

# ເຈົ້າສາມາດອ່ານເພີ່ມ ເຕີມໄດ້ໃນປຶ້ມຫົວນີ້!




**ກຸ່ມປະເທດ ອາຊຽນ**

ຂຽນ: ລຸງຊາຊ່າ, ແຕ້ມ: ເຊັ່ງໄຊ ກູ່ຊົ່ງ ແລະ ກົ່ງຊົ່ວ ເຊັ່ງລີ, ແປ: ໄຜ່ທວານ, ໂຣຊັນນາ ບໍລິການແປພາສາ.
ກວດແກ້: ບັນນາທິການ ອ້າຍໜູນ້ອຍ, ຈັດພິມໂດຍ: ສຳນັກພິມ ອ້າຍໜູນ້ອຍ, ຫຼວງພະບາງ.
ທະບຽນອະນຸຍາດ: ລທບ 370/ພຈ08112011. ພິມຄັ້ງທີ1
ພິມທີ່ ໂຮງພິມ ສີສະຫວາດ, ວຽງຈັນ, 2011. ຂະໜາດ 19x26ຊມ, ຈຳນວນ 6000 ຫົວ


ສະຫງວນລິຂະສິດບົດຂຽນ © 2012 ລຸງຊາຊ່າ, ສະຫງວນລິຂະສິດຮູບແຕ້ມ © 2012 ອ້າຍໜູນ້ອຍ

ບາງຮູບພາບໃນປຶ້ມຫົວນີ້ ໄດ້ມາຈາກ www.wikipedia.com. ບາງຮູບເຂົາເຈົ້າບໍ່ຖືລິຂະສິດ ບາງຮູບກໍ່ອະນຸຍາດໃຫ້ໃຊ້ຕາມລະບຽບຂອງອົງການ Creative Commons. ລາຍລະອຽດທ່ານສາມາດເຂົ້າຊົມ http://creativecommons.org/licenses/bysa/3.0/ (ຫຼື 2.5 ຫຼື 2.0, ຫຼື ຕາມທີ່ໄດ້ຂຽນໄວ້ແຕ່ລະຮູບ). ພວກເຮົາຂໍຂອບໃຈນຳບັນດານັກຖ່າຍຮູບທັງຫຼາຍ ທີ່ເຮັດວຽກຢ່າງໜັກ ເພື່ອໃຫ້ຜູ້ຄົນໄດ້ນຳໃຊ້ຢ່າງກວ້າງຂວາງ. ໜ້າປົກ: ຄວາຍ: PaulRudd CC-BY-SA 3.0; ນົກຟ້ອນ: Frank Wouters, CC-BY-SA 2.0; ປະຕູໄຊ: Slug78 CC-BY-SA 2.0; ສຸເລົ່າ: Azreey CC-BY-SA 3.0


**The Countries of ASEAN,** with non-fiction text and story selection by Sasha Alyson, Story illustrations by Sengsay Khousong and Kongsoua Sengli. Published by Big Brother Mouse, Luang Prabang, Lao PDR.


ກຸ່ມປະເທດ
ອາຊຽນ
ໂດຍ: ລຸງຊາຊ່າ
ມຽນມ້າ
ລາວ
ໄທ
ຫວຽດນາມ
ກຳປູເຈຍ
ຟີລິບປິນ
ມາເລເຊຍ
ບຣູໄນ
ສິງກະໂປ
ອິນໂດເນເຊຍ
ປະຫວັດສາດ • ວັດທະນະທຳ • ພູມມີປະເທດ • ສາສະໜາ • ນິທານ